**ຜ-ຟຟລ ເຂົ້າຮ່ວມງານ "ພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນປະຈໍາປີ 2022 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ"**

ໃນວັນທີ 23 ທັນວາ 2022, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ເຂົ້າຮ່ວມງານ "ພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນປະຈໍາປີ 2022 ຂອງບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ຫຼື ຕລຊລ **(LSX Disclosure Award 2022)".**

ພິທີມອບຮັບລາງວັນໃນປີນີ້ ແມ່ນເພື່ອເປັນການສະຫຼຸບຕີລາຄາຍ້ອງຍໍຜົນງານການເປີດເຜີຍຂໍ້ມູນ ຂອງບໍລິສັດຈົດທະບຽນໃນ ຕລຊລ ຕະຫຼອດໄລຍະປີ 2022 ທີ່ຕ້ອງໄດ້ປະຕິບັດວຽກງານການເປີດເຜີຍຂໍ້ມູນໃຫ້ແກ່ບັນດາຜູ້ລົງທຶນ ແລະ ມວນຊົນຮັບຊາບເປັນປະຈໍາ. ການມອບຮັບລາງວັນດັ່ງກ່າວ. ຍັງເປັນການກະຕຸກຊຸກຍູ້ໃຫ້ບັນດາບໍລິສັດຈົດທະບຽນໄດ້ປະຕິບັດການລາຍງານ ແລະ ເປີດເຜີຍຂໍ້ມູນໃຫ້ສືບຕໍ່ເປັນປົກກະຕິຕໍ່ເນື່ອງເພື່ອສ້າງຄວາມເຊື່ອໝັ້ນແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດ. ໃນປີ 2022 ຜ-ຟຟລ ແມ່ນໄດ້ລາງວັນຄື: " ການເປີດເຜີຍຂໍ້ມູນດີເດັ່ນປະເພດ 1", ເຊິ່ງ ທ່ານ ນາງ ໂພຄິນ ອັບໄພ ຜູ້ອໍານວຍການຝ່າຍ ບໍລິຫານງານສະໜັບສະໜູນອົງກອນ ໄດ້ເປັນຜູ້ຕາງໜ້າ ບໍລິສັດ ຜ-ຟຟລ ເປັນຜູ້ຮັບລາງວັນດັ່ງກ່າວ.







